**DAK LAK RUBBER COMPANY.,LTD (DAKLAORUCO)**
**Address: Thaluong Village - Pakse District - Champasak Province - Lao PDR**
**Tel: 00856 31 21 25 70; Fax: 00856 31 25 29 82**
**Email: daklaoruco.lao@gmail.com Website: http://www.daklaoruco.com**

ເລກທີ 07/ລງ- FSC *ປາກເຊ, ວັນທີ 20 ເດືອນ 01 ປີ 2025*

# ບົດລາຍງານ

# ການປະເມີນຜົນກະທົບຕໍ່ສັງຄົມ ປີ 2024

- ອີງຕາມກົດລະບຽບເລກທີ 01/ລບ-ບສ ລົງວັນທີ 29/01/2024 ວ່າດ້ວຍຄຳແນະນຳໃນການຕິດຕາມກວດກາເຄື່ອນໄຫວການຄຸ້ມຄອງປ່າໄມ້ຂອງບໍລິສັດ.

- ອີງຕາມບົດລາຍງານສະບັບເລກທີ 03/ບງ-ບສ, ລົງວັນທີ 07/01/2025 ວ່າດ້ວຍການຈັດຕັ້ງປະຕິບັດວຽກງານການຜະລິດທຸລະກິດໃນປີ 2024 ແລະ ແຜນການຜະລິດ ທຸລະກິດໃນປີ 2025;

- ອີງຕາມບົດບາດແລະໜ້າທີ່ ຂອງຄະນະ FSC ຂອງບໍລິສັດ;

ຫ້ອງການບໍລິສັດລາຍງານການປະເມີນຜົນກະທົບຕໍ່ສັງຄົມປີ 2024 ຕໍ່ຜູ້ອຳນວຍການບໍລິສັດດັ່ງນີ້:

**I. ສະພາບການຜະລິດ ແລະ ທຸລະກິດຂອງບໍລິສັດໃນປີ 2024:**

**1. ປະຕິບັດເປົ້າໝາຍການຜະລິດທຸລະກິດ**

| ລດ | ເນື້ອໃນ | ແຜນການປີ 2024 (ໂຕນ) | ປະຕິບັດໄດ້ປີ 2024 (ໂຕນ) | ອັດຕາສ່ວນ (%) |
|---|---|---|---|---|
| **I** | **ຢາງພາລາ** | | | |
| 1 | ປະລິມານຂຸດຄົ້ນ | 14.000 | 11.116,40 | 79,40 |
| 2 | ປະລິມານຢາງທີ່ຊື້ພາຍນອກ | 500 | 510,47 | 102,09 |
| **II** | **ໝາກມ່ວງຫີມະພານ** | | | |
| 1 | ປະລິມານຂຸດຄົ້ນ | 137 | 153,42 | 112,0 |
| 2 | ປະລິມານສົ່ງອອກ | 137 | 153,42 | 112,0 |

- ລວມຜະລິດຕະພັນປຸ່ງແຕ່ງ: 11.457,73 ໂຕນຢາງພາລາ
- ລວມຜະລິດຕະພັນສົ່ງອອກຂາຍ: 10.714,64 ໂຕນຢາງພາລາ

**2. ປະຕິບັດເປົ້າໝາຍທາງດ້ານການເງິນ**

- ລາຄາຂາຍສະເລ່ຍຂອງຜະລິດຕະພັນຢາງພາລາສຳເລັດຮູບ: 1.692,50 ໂດລາ/ໂຕນ ບັນລຸ 146,5% ທຽບໃສ່ລາຄາຂອງແຜນການ (1.155 ໂດລາ/ໂຕນ).
- ລາຄາຂາຍ ສະເລ່ຍ ຂອງໝາກມ່ວງຫີມະພານສົດ 934,05 ໂດລາ/ໂຕນ ບັນລຸ 89,81% ທຽບໃສ່ລາຄາຂອງແຜນການ (1.040 ໂດລາ/ໂຕນ).
- ລາຍຮັບການຜະລິດ ແລະ ທຸລະກິດທັງໝົດ: 403,4 ຕື້ກີບ.
- ຈ່າຍເຂົ້າງົບປະມານແຫ່ງລັດ: 40,6 ກີບ.

**II ຜົນກະທົບຕໍ່ສັງຄົມໃນບັນດາຫນ່ວຍງານ**

**1. ຜົນກະທົບທາງບວກ**

**1.1 ປະກອບສ່ວນເຂົ້າງົບປະມານແຫ່ງລັດ, ສ້າງວຽກເຮັດງານທຳ, ເພີ່ມລາຍຮັບໃຫ້ແກ່ພະນັກງານ ແລະ ປະຊາຊົນທ້ອງຖິ່ນ:**

- ປະຈຸບັນ, ບໍລິສັດໄດ້ສ້າງວຽກເຮັດງານທຳໃຫ້ແກ່ຄົນງານ 2.574 ຄົນ. ໃນນັ້ນ, ແຮງງານທ້ອງຖິ່ນ (ຄົນລາວ) ແມ່ນ 2.400 ຄົນ ກວມເອົາ 93,24% ຂອງຈຳນວນແຮງງານທັງໝົດຂອງບໍລິສັດ, ສ່ວນໃຫຍ່ແມ່ນຢູ່ 02 ແຂວງຄື: ແຂວງຈຳປາສັກ ແລະ ສາລະວັນ. ຂໍ້ມູນລະອຽດຂອງແຕ່ລະຫນ່ວຍງານແມ່ນສະແດງໃຫ້ເຫັນຢູ່ໃນຕາຕະລາງດັ່ງຕໍ່ໄປນີ້:

**ຕາຕະລາງສະຫຼຸບແຮງງານທັງຫມົດຂອງບໍລິສັດ ຈົນເຖິງປະຈຸບັນ 31/12/2024**

| ລດ | ໜ່ວຍງານ/ພະແນກການ | ແຮງງານທີ່ຕ້ອງການ | ລວມແຮງງານຕົວຈິງທັງໝົດ | ຫວຽດນາມ | | ລາວ | | ເກີນ (+) ຂາດ (-) |
|---|---|---|---|---|---|---|---|---|
| | | | | ຈນ | % | ຈນ | % | |
| 1 | ຫ້ອງການ ບໍລິສັດ | 50 | 47 | 37 | 78,72 | 10 | 21,28 | -3 |
| 2 | ນິຄົມ 1 | 705 | 655 | 29 | 4,43 | 626 | 95,57 | -50 |
| 3 | ນິຄົມ 2 | 604 | 596 | 23 | 3,86 | 573 | 96,14 | -8 |
| 4 | ນິຄົມ 3 | 691 | 672 | 37 | 5,51 | 635 | 94,49 | -19 |
| 5 | ນິຄົມ 4 | 484 | 471 | 28 | 5,94 | 443 | 94,06 | -13 |
| 6 | ໂຮງງານປຸງແຕ່ງ | 133 | 133 | 20 | 15,04 | 113 | 84,96 | 0 |
| **ລວມທັງໝົດ** | | **2.667** | **2.574** | **174** | **6,76** | **2.400** | **93,24** | **-93** |

ແຮງງານສ່ວນຫຼາຍແມ່ນກຳມະກອນຂຶດຢາງຢູ່ບັນດານິຄົມ. ປັດຈຸບັນມີແຮງງານທາງອ້ອມ 220/234 ຄົນ, ໃນນັ້ນເປັນຄົນລາວ 46 ຄົນ, ກວມເອົາ 20,91%. ປັດຈຸບັນມີແຮງງານດິບ 2.354/2.433 ຄົນ, ໃນນັ້ນເປັນຄົນລາວ 2.345 ຄົນ ກວມເອົາ 99.62%.

**ຕາຕະລາງສະຫຼຸບຂອງ ແຮງງານຮອດວັນທີ 31/12/2024**

| ລດ | ເປົ້າໝາຍແຮງງານ | ແຮງງານທີ່ຕ້ອງການ | ລວມແຮງງານຕົວຈິງທັງໝົດ | ຫວຽດນາມ | | ລາວ | | ເກີນ (+) ຂາດ (-) |
|---|---|---|---|---|---|---|---|---|
| | | | | ຈນ | % | ຈນ | % | |
| 1 | ແຮງງານທາງອ້ອມ | 234 | 220 | 174 | 79,09 | 46 | 20,91 | -14 |
| 2 | ແຮງງານດິບ | 2.427 | 2.354 | 9 | 0,38 | 2.345 | 99,62 | -79 |
| *2.1* | *ກຳມະກອນຂຶດຢາງ* | *2.321* | *2.242* | | *0,00* | *2.242* | *100,00* | *-79* |
| *2.2* | *ກຳມະກອນປຸງແຕ່ງ* | *72* | *72* | *7* | *9,72* | 65 | *90,28* | *0* |
| *2.3* | *ກຳມະກອນຂັບລົດ* | *27* | *27* | *1* | *3,70* | 26 | *96,30* | *0* |
| *2.4* | *ກຳມະກອນກົນຈັກ, ສິ່ງແວດລ້ອມ* | *13* | *13* | *1* | *7,69* | 12 | *92,31* | *0* |
| **Tổng** | | **2.667** | **2.607** | **183** | **7,11** | **2.391** | **92,89** | **-93** |

**- ລາຍຮັບສະເລ່ຍ:** ລາຍຮັບສະເລ່ຍຂອງຜູ້ອອກແຮງງານປີ 2024 ແມ່ນສະແດງຢູ່ໃນຕາຕະລາງຂ້າງລຸ່ມນີ້:

ເງິນເດືອນສະເລ່ຍ ປີ 2024

| ລດ | ເປົ້າໝາຍ | ຫໜ | ປີ 2023 | ປີ 2024 | ອັດຕາສ່ວນ % 2024/2023 |
|---|---|---|---|---|---|
| 1 | *ແຮງງານທາງອ້ອມ* | LAK | 17.907.658 | 19.762.470 | 110,36 |
| 2 | *ກຳມະກອນຂຶດຢາງ* | LAK | 3.577.844 | 4.833.080 | 135,08 |
| 3 | *ກຳມະກອນປຸງແຕ່ງ* | LAK | 5.426.155 | 6.942.776 | 127,95 |
| 4 | *ກຳມະກອນຂັບລົດ* | LAK | 5.426.342 | 8.051.113 | 148,37 |
| 5 | *ກຳມະກອນກົນຈັກ, ສິ່ງແວດລ້ອມ* | LAK | 7.447.237 | 8.407.730 | 112,90 |

- ນອກຈາກ ວຽກງານປູກຝັງ ແລະ ບົວລະບັດສວນຢາງ ຍັງໄດ້ສ້າງວຽກເຮັດງານທຳໃຫ້ຄົນງານຕາມລະດູການນັບເປັນຮ້ອຍຄົນ, ປະກອບສ່ວນແກ້ໄຂຄວາມອຶດຫິວ, ຫຼຸດຜ່ອນຄວາມທຸກຍາກ, ປັບປຸງຊີວິດການເປັນຢູ່, ຮັກສາຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມຢູ່ທ້ອງຖິ່ນ.

***1.2 ປະຕິບັດລະບອບສະຫັວດດີການ ແລະ ນະໂຍບາຍຂອງພະນັກງານ***

- ວຽກງານການຝຶກອົບຮົມ, ຍົກລະດັບທັກສະແລະຄວາມຮູ້ສຳລັບພະນັກງານກຳມະກອນ:

+ ຝຶກອົບຮົມກຳມະກອນຊຸດຄົ້ນຂຶດຢາງຕາມແຈ້ງການເລກທີ 76/ຈກ-ບສ ລົງວັນທີ 19/02/2024 ໃຫ້ແກ່ນັກຮຽນທັງໝົດ 316 ຄົນ, ຈຳນວນນັກຮຽນທັງໝົດແມ່ນໄດ້ຕາມຄວາມຮຽກຮ້ອງຕ້ອງການ ແລະ ໄດ້ຮັບເຂົ້າເປັນກຳມະກອນ.

**ຕາຕະລາງຕິດຕາມການຝຶກອົບຮົມຂຶດຢາງປີ 2024**

ຫົວໜ່ວຍ: ຄົນ

| ລດ | ໜ່ວຍງານ | ຝຶກອົບຮົມໃໝ່ ກກ ຂຶດຂ້ວາມ | ຝຶກອົບຮົມໃໝ່ ກກ ຂຶດທວາຍ | ກວດສີມືແຮງງານ | ລວມທັງໝົດ | ໝາຍເຫດ |
|---|---|---|---|---|---|---|
| 1 | NT1 | 30 | 0 | 731 | 761 | |
| 2 | NT2 | 33 | 0 | 508 | 541 | |
| 3 | NT3 | 111 | 66 | 592 | 769 | |
| 4 | NT4 | 38 | 38 | 336 | 412 | |
| ***** | **Tổng** | **212** | **104** | **2.167** | **2.483** | |

+ ແຕ່ງຕັ້ງພະນັກງານ 03 ຄົນ ຂອງຫ້ອງຄຸ້ມຄອງຄຸນນະພາບ ເຂົ້າຮ່ວມຊຸດຝຶກອົບຮົມປີ 2024 ໂດຍສູນຄຸ້ມຄອງຄຸນນະພາບຢາງພາລາ ທຳມະຊາດ ຂອງສະຖາບັນຄົ້ນຄວ້າຢາງພາລາຫວຽດນາມ ຕາມແຈ້ງການເລກທີ 152/ຈກ-ບສ ລົງວັນທີ 27/03/2024.

+ ປະສານສົມທົບກັບກອງບັນຊາການ ປກສ ແຂວງຈຳປາສັກ ຈັດຊຸດຝຶກອົບຮົມ ສະກັດກັ້ນ ແລະ ຕ້ານອັກຄີໄພ ຢູ່ ໂຮງງານປຸງແຕ່ງ, ນິຄົມ 1 ແລະ ນິຄົມ 3 ຕາມແຈ້ງການ ສະບັບເລກທີ 249/ຈກ-ບສ, ລົງວັນທີ 15/05/2024.

+ ແນະນຳຝຶກອົບຮົມການປະຖົມພະຍາບານເບື້ອງຕົ້ນໃຫ້ແກ່ພະນັກງານທັງໝົດຂອງບໍລິສັດ ຕາມແຈ້ງການເລກທີ 366/ຈກ-ບສ ລົງວັນທີ 08/07/2024.

+ ປະສານສົມທົບກັບສະຫະພັນກຳມະບານແຂວງຈຳປາສັກ ເພື່ອຝຶກອົບຮົມວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານໃຫ້ແກ່ພະນັກງານກຳມະກອນຢູ່ໂຮງງານ, ບັນດາຫ້ອງການ ແລະ ຕາງໜ້າໃຫ້ແກ່ແຕ່ລະນິຄົມ

ທັງໝົດ (84 ຄົນ) ຕາມແຈ້ງການ 367/ຈກ-ບສ ລົງວັນທີ 10/07/2024.

+ ປະສານສົມທົບກັບສູນຍັ້ງຢືນຄວາມສອດຄ່ອງຂອງ Quacert ເພື່ອເປີດຊຸດຝຶກອົບຮົມຜູ້ກວດສອບພາຍໃນເຊື່ອມສານລະບົບການຄຸ້ມຄອງຕາມມາດຕະຖານ ISO 9001:2015 ແລະ ISO 14001:2015 ໃຫ້ແກ່ນັກຮຽນ 28 ຄົນ ຕາມແຈ້ງການເລກທີ 444/ຈກ-ບສ ລົງວັນທີ 15/08/2024.

+ ແຕ່ງຕັ້ງພະນັກງານ 04 ຄົນ ເຂົ້າຮ່ວມຝຶກອົບຮົມ CEO ທີ່ໂຮງຮຽນ Top Olympia Business School - Da Nang.

+ ປະສານສົມທົບກັບສະຖາບັນທີ່ປຶກສາດ້ານວິຊາການ SFMI ຈັດຊຸດຝຶກອົບຮົມເພື່ອປັບປຸງຄວາມສາມາດກ່ຽວກັບການຄຸ້ມຄອງປ່າໄມ້ແບບຍືນຍົງ ແລະ ການຍັ້ງຢືນປ່າໄມ້ ກ່ຽວກັບການຂຸດຄົ້ນໄມ້ທີ່ມີຜົນກະທົບຕໍ່າ, ມາດຕະຖານແນະນຳການນຳໃຊ້ເຄື່ອງໝາຍການຄ້າ FSC ແລະ ແນະນຳຄຸ້ມຄອງລະບົບຕ່ອງໂສ້ຜະລິດຕະພັນໃຫ້ພະນັກງານຈຳນວນ 55 ຄົນ ຕາມແຈ້ງການ 680/ຈກ-ບສ ລົງວັນທີ 17/12/2024.

- ພະນັກງານໄດ້ຮັບການເບິ່ງແຍງສຸຂະພາບ, ຊີວິດການເປັນຢູ່ ແລະຈິດໃຈ, ໄດ້ເຂົ້າຮ່ວມປະກັນສັງຄົມ, ຄວາມປອດໄພດ້ານແຮງງານເຊັ່ນ: ມີບ່ອນພັກອາໄສຖາວອນ, ຮັບປະກັນຊີວິດການເປັນຢູ່ປະຈຳວັນ, ໄດ້ຮັບຊຸດປ້ອງກັນແຮງງານ,ກວດສຸຂະພາບປະຈຳປີ, ໄດ້ຮັບການຊ່ວຍເຫຼືອຈ່າຍເງິນສົມທົບປະກັນສັງຄົມ ແລະ ປະກັນຊີວິດ 100%.

+ ໃນປີ 2024, ບໍລິສັດໄດ້ຈັດຕັ້ງການກວດສຸຂະພາບປະຈຳປີໃຫ້ແກ່ພະນັກງານ ຢູ່ໂຮງງານປຸງແຕ່ງ 95 ຄົນ, ນິຄົມ 1: 642 ຄົນ ແລະ ນິຄົມ 3: 633 ຄົນ ຕາມແຈ້ງການ 315/ຈກ-ບສ ລົງວັນທີ 19/06/2024.

+ ໃນປີ 2024, ບໍລິສັດໄດ້ເບີກຊຸດປ້ອງກັນແຮງງານໃຫ້ແກ່ກຳມະກອນຂີດຢາງຈຳນວນ: 2.329 ຄົນ ແລະ ກຳມະກອນໂຮງງານຈຳນວນ 140 ຄົນ ຕາມແຈ້ງການ 339/ຈກ-ບສ ລົງວັນທີ 27/06/2024.

- ວຽກງານສະຫວັດດີການສັງຄົມ:

+ ບໍລິສັດຈ່າຍເງິນໂບນັດໃຫ້ແກ່ພະນັກງານໃນໂອກາດວັນພັກທາງລັດຖະການເຊັ່ນ: ປີໃໝ່ຫວຽດນາມ, ປີໃໝ່ລາວ, ປີໃໝ່ສາກົນ...;

+ ມອບລາງວັນໃຫ້ບັນດາໜ່ວຍງານ ແລະ ບຸກຄົນທີ່ມີຜົນງານດີເດັ່ນໃນການຜະລິດ;

+ ຈັດທົວທ່ອງທ່ຽວໃຫ້ພະນັກງານ ເພື່ອສ້າງແຮງຈູງໃຈ ແລະ ຊຸກຍູ້ໃຫ້ພະນັກງານເຮັດວຽກ ແລະ ມີຄວາມຜູກພັນກັບວິສາຫະກິດ;

+ ຢ້ຽມຢາມຖາມຂ່າວພະນັກງານທີ່ເຈັບປ່ວຍ ແລະ ປິ່ນປົວຢູ່ໂຮງໝໍ;

+ ຊ່ວຍເຫຼືອພະນັກງານທີ່ເກີດອຸບັດເຫດ, ຊັບສິນເປ່ເພ ຫຼື ສູນເສຍ ໃນເວລາປະຕິບັດໜ້າທີ່ (ແຈ້ງການສະບັບ 448/ຈກ-ບສ ລົງວັນທີ 17/08/2025 ວ່າດ້ວຍຊ່ວຍເຫຼືອລາຍຈ່າຍໃຫ້ພະນັກງານກຳມະກອນ ຖືກຄົນຮ້າຍຈູດລົດໃນເວລາປະຕິບັດໜ້າທີ່).

***1.3 ການພົວພັນກັບອຳນາດການປົກຄອງທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ***

- ບໍລິສັດມີສາຍພົວພັນອັນດີງາມກັບພາກລັດ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງເຊັ່ນ: ນາຍບ້ານ, ເຈົ້າໜ້າທີ່ປ່າໄມ້, ຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມ, ພາສີອາກອນ, ອົງການປະກັນສັງຄົມ;

- ບໍລິສັດຍາມໃດກໍ່ສ້າງເງື່ອນໄຂໃຫ້ພະນັກງານເຂົ້າຮ່ວມບັນດາກິດຈະກຳວັດທະນະທຳພື້ນເມືອງ. ປົກປັກຮັກສາພື້ນທີ່ນະມັດສະການແລະປ່າຊ້າທ້ອງຖິ່ນ.

+ ປີ 2024, ບໍລິສັດໄດ້ໃຫ້ການສະໜັບສະໜູນດ້ານການເງິນເຂົ້າໃນການເຄື່ອນໄຫວຂອງທ້ອງຖິ່ນ, ໄດ້ປະກອບສ່ວນເຂົ້າໃນການສ້ອມແປງເສັ້ນທາງ, ສິ່ງອຳນວຍຄວາມສະດວກ, ເຄື່ອງອຸປະກອນ, ລາຍຈ່າຍຈັດກອງປະຊຸມເລືອກຕັ້ງ ແລະ ຈັດງານບຸນຕ່າງໆ...ລວມມູນຄ່າອຸປະຖຳທັງໝົດໃນປີ 2024 ແມ່ນ 902,975,000 ກີບ

**2. ຜົນກະທົບທາງລົບ**

- ຜົນກະທົບທາງລົບຕໍ່ຜູ້ອອກແຮງງານ ແລະ ຊຸມຊົນຈາກການເຄື່ອນໄຫວຜະລິດທຸລະກິດຂອງບັນດາໜ່ວຍງານ: ຍັງບໍ່ທັນກວດພົບ.

- ມາດຕະການຫຼຸດຜ່ອນຜົນກະທົບດ້ານລົບ: ເພີ່ມທະວີການໂຄສະນາເຜີຍແຜ່ນະໂຍບາຍ, ກົດລະບຽບຂອງບໍລິສັດກ່ຽວກັບລະບົບເງິນເດືອນ, ກົດລະບຽບແຮງງານ, ຄວາມປອດໄພຂອງແຮງງານ, ຜົນປະໂຫຍດຕ່າງໆໃນເວລາເຂົ້າຮ່ວມການປະກັນສັງຄົມ… ແນໃສ່ສ້າງຈິດສຳນຶກໃຫ້ແກ່ຜູ້ອອກແຮງງານ ແລະເພື່ອຜູ້ອອກແຮງງານເຫັນໄດ້ຄວາມພະຍາຍາມຂອງບໍລິສັດເພື່ອຜົນປະໂຫຍດແລະສຸຂະພາບຂອງ ຜູ້ອອກແຮງງານ ແລະຊຸມຊົນ, ຍ້ອນແນວນັ້ນຈຶ່ງຈະປະຕິບັດບັນດາກົດລະບຽບຂອງບໍລິສັດວາງອອກໄດ້ດີກວ່າເກົ່າ. ສ້າງຄວາມໄວ້ວາງໃຈໃນຍຸດທະສາດທຸລະກິດແບບຍືນຍົງຂອງບໍລິສັດ.

## III. ການປະເມີນໂດຍລວມ

### 1. ຂໍ້ດີ:

- ບໍລິສັດ ມີມູນເຊື້ອຄວາມສາມັກຄີອັນດີງາມກັບທ້ອງຖິ່ນ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນ, ສ້າງທຸກເງື່ອນໄຂ ສະໜັບສະໜູນ, ຊ່ວຍເຫຼືອທ້ອງຖິ່ນທີ່ບັນດາໜ່ວຍງານຕັ້ງຢູ່, ປະກອບສ່ວນຮັກສາຄວາມສະຫງົບທາງດ້ານການເມືອງ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

- ການເບິ່ງແຍງຊີວິດການເປັນຢູ່ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ອອກແຮງງານນັບມື້ນັບໄດ້ຮັບຄວາມເອົາໃຈໃສ່.

### 2. ຂໍ້ເສຍ:

- ສະພາບດິນຟ້າອາກາດບໍ່ເອື້ອອຳນວຍຄວາມສະດວກ, ໄລຍະຕົ້ນລະດູແຫ້ງແລ້ງແກ່ຍາວ, ກາງລະດູມັກຈະໄດ້ຮັບຜົນກະທົບຈາກຝົນຕົກ. ພ້ອມກັນນັ້ນບັນຫາການລັກລອບຢາງໂດຍຜູ້ອອກແຮງງານນັບມື້ນັບເພີ່ມຂຶ້ນ, ຂາດການຄວບຄຸມຈາກອຳນາດການປົກຄອງທ້ອງຖິ່ນ, ສິ່ງຜົນກະທົບຕໍ່ການປະຕິບັດແຜນການ ຂອງບໍລິສັດ,
ປີ 2024 ບັນລຸ ໄດ້ພຽງ 79,40% ຂອງ ແຜນການ.

- ແຮງງານບໍ່ໝັ້ນຄົງ, ຂາດແຮງງານຊຸດຄົ້ນຢາງ, ພະນັກງານທາງອ້ອມຫຼາຍຄົນໄດ້ລາອອກຈາກວຽກ ເຮັດໃຫ້ການຮັບສະໝັກພະນັກງານໃໝ່ ແລະ ຝຶກອົບຮົມບໍ່ທ່ວງທັນ, ຄຸນນະພາບດ້ານບຸກຄະລາກອນ ບໍ່ຮັບປະກັນ ໃນການຕອບສະໜອງຄວາມຕ້ອງການຂອງວຽກງານ.

- ຜູ້ອອກແຮງງານຍັງບໍ່ທັນຕື່ນຕົວໃນການປະຕິບັດກົດລະບຽບຂອງບໍລິສັດ ແລະ ລະບຽບກົດໝາຍ. ຍັງບໍ່ທັນຮັບຮູ້ເຖິງຜົນປະໂຫຍດຂອງການເຂົ້າຮ່ວມປະກັນສັງຄົມເຮັດໃຫ້ອັດຕາສ່ວນແຮງງານທີ່ເຂົ້າຮ່ວມປະກັນສັງຄົມຕໍ່າ.

ຂ້າງເທິງນີ້ແມ່ນເນື້ອໃນບົດລາຍງານການປະເມີນຜົນກະທົບຕໍ່ສັງຄົມປີ 2024 ຂອງຫ້ອງການບໍລິສັດ. ສະເໜີລາຍງານມາຍັງຜູ້ອຳນວຍການບໍລິສັດພິຈາລະນາ ແລະ ມີທິດຊີ້ນຳດ້ວຍ.

**ຫ້ອງການບໍລິສັດ**

**ຈັນສຸກ ໄຊຍະສິດ**

**ບ່ອນນຳສົ່ງ:**

- ຄະນະ ອນກ ບສ;
- ບັນດາພາກສ່ວນທີ່ກ່ຽວຂ້ອງ;
- ຄະນະ FSC ບສ;
- Website ບສ;
- ສຳເນົາຂາອອກ-ຂາເຂົ້າ.